# ໂຄງການຄຸ້ມຄອງການປະມົງຊຸມຊົນແບບມີສ່ວນຮ່ວມ ສ້າງຜົນປະໂຫຍດໃຫ້ຊຸມຊົນ



## ບົດສະເໜີ

✣ ການຄຸ້ມຄອງການປະມົງຊຸມຊົນແບບມີສ່ວນຮ່ວມ ເປັນໂຄງການທີ່ໄດ້ຮັບການຊ່ວຍເຫຼືອຈາກກອງທຶນອະນຸຮັກທຳມະຊາດໂລກ ປະເທດສະວິດ (WWF Swizerland) ໂດຍຜ່ານຫ້ອງການກອງທຶນອະນຸຮັກທຳມະຊາດໂລກ ປະຈຳປະເທດລາວ (WWF Lao) ເຊິ່ງຫ້ອງການດັ່ງກ່າວໄດ້ເລີ່ມຕົ້ນເຮັດວຽກກັບກົມລ້ຽງສັດ ແລະ ການປະມົງ ກະຊວງກະສິກຳ ແລະ ປ່າໄມ້ມາແຕ່ປີ 2002 ເປັນຕົ້ນມາ ປະກອບມີໜ້າວຽກການສຳຫຼວດສຶກສາຊະນິດພັນປາ ແລະ ສ້າງຕັ້ງວັງສະຫງວນ ປັດຈຸບັນສຳເລັດການສ້າງວັງສະຫງວນ 250 ກວ່າວັງໃນ 7 ແຂວງທົ່ວປະເທດ ໃນນີ້ສະເພາະແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ ໄດ້ເລີ່ມຈັດຕັ້ງປະຕິບັດໂຄງການແຕ່ທ້າຍເດືອນທັນວາ ປີ 2016 ເປັນຕົ້ນມາ ມີຈຸດປະສົງປັບປຸງ ຄຸ້ມຄອງຊັບພະຍາກອນນ້ຳ ຢູ່ເຂດນ້ຳຕອນກາງ ໂດຍການສ້າງວັງສະຫງວນ ຄັດເລືອກຄະນະຄຸ້ມຄອງວັງສະຫງວນ ແລະ ໜ່ວຍງານກວດກາການປະມົງຂັ້ນບ້ານ ພ້ອມທັງສົ່ງເສີມປັບປຸງຊີວິດການເປັນຢູ່ ພັດທະນາທາງເລືອກໃນການສ້າງລາຍຮັບ ເພື່ອຫຼຸດຜ່ອນການທຳລາຍຊັບພະຍາກອນທຳມະຊາດຢູ່ນ້ຳ ແລະ ປກຈິດສຳນຶກຂອງຊຸມຊົນເພື່ອໃຫ້ມີຄວາມເຂົ້າໃຈຫຼາຍຂຶ້ນກ່ຽວກັບຜົນປະໂຫຍດຂອງວັງສະຫງວນ ແລະ ການຄຸ້ມຄອງການປະມົງ.



**ທ່ານ ສຸດໃຈ ລຳພູໄຊ** ຫົວໜ້າໂຄງການຄຸ້ມຄອງການປະມົງຊຸມຊົນແບບມີສ່ວນຮ່ວມຢູ່ເຂດແມ່ນ້ຳຂອງຕອນກາງກ່າວວ່າ: ໂຄງການຄຸ້ມຄອງການປະມົງຊຸມຊົນແບບມີສ່ວນຮ່ວມຢູ່ເຂດແມ່ນ້ຳຂອງຕອນກາງແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ ປະກອບມີກິດຈະກຳຫຼຸດຜ່ອນຄວາມກົດດັນຂອງຊັບພະຍາກອນທຳມະຊາດນ້ຳຈືດ ໂດຍສະໜັບສະໜູນຊີວິດການເປັນຢູ່ຂອງຊຸມຊົນທ້ອງຖິ່ນ ແລະ ພັດທະນາທາງເລືອກຂອງແຫຼ່ງລາຍໄດ້ ເກັບກຳຂໍ້ມູນຄວາມອຸດົມສົມບູນທາງດ້ານ ຊີວະນາໆພັນໃນແມ່ນ້ຳຕອນກາງ (ລະດັບແຫຼ່ງອາຫານ ແຫຼ່ງວາງໄຂ່ ແລະ ຊະນິດພັນທີ່ເປັນບູລິມະສິດຖືກໄພຂົ່ມຂູ່) ປັບປຸງການຄຸ້ມຄອງຊັບພະຍາກອນນ້ຳຈືດທຳມະຊາດຢູ່ເຂດແມ່ນ້ຳຂອງໂດຍຜ່ານການສ້າງວັງສະຫງວນ ຄະນະຄຸ້ມຄອງວັງສະຫງວນ ແລະ ໜ່ວຍງານກວດກາການປະມົງຂັ້ນບ້ານ ເຊິ່ງຕະຫຼອດໄລຍະ 6 ເດືອນຂອງການຈັດຕັ້ງປະຕິບັດໂຄງການຜ່ານມາໄດ້ສຳເລັດການເກັບກຳຂໍ້ມູນພື້ນຖານທາງດ້ານເສດຖະກິດ ແລະ ສັງຄົມຢູ່ 19 ບ້ານເປົ້າໝາຍ 6 ເມືອງ 2 ແຂວງ ຄື: ແຂວງບໍລິຄຳໄຊ ມີ 9 ບ້ານເປົ້າໝາຍປະກອບມີ ບ້ານທ່າບົກ ຜາໂປ່ງ ແລະ ບ້ານໂພນສັນ ເມືອງທ່າພະບາດ ບ້ານຊອດ ທ່າກະຖິ່ນ ແລະ ບ້ານບຸ້ງວາງ ເມືອງປາກກະດິງ ບ້ານກ້ວຍອຸດົມ ປາກຊັນ ແລະ ບ້ານແກ້ງສະດອກ ເມືອງປາກຊັນ ລວມທັງໝົດ 1.847 ຄອບຄົວ ສ່ວນແຂວງຄຳມ່ວນ ມີ 10 ບ້ານເປົ້າໝາຍ ປະກອບມີ ບ້ານຈອມແຈ້ງ ນາເມືອງ ແລະ ບ້ານຫ້ວຍນາງລີ ເມືອງທ່າແຂກ ບ້ານກຸດຈັບ ດອນຂຽວໃຕ້ ແລະ ບ້ານບຶ່ງສານທ່າ ເມືອງໜອງບົກ ບ້ານປຸ່ງເໜືອ ຫີນບູນເໜືອ ຫີນບູນໃຕ້ ແລະ ບ້ານຫີນລາດ ເມືອງຫີນບູນ ລວມທັງໝົດ 2.058 ຄອບຄົວ ໄດ້ສຳເລັດການສຳຫຼວດຂໍ້ມູນຄວາມຮູ້ພື້ນຖານ ທັດສະນະຄະຕິ ແລະ ການປະຕິບັດກ່ຽວຂ້ອງກັບການດຳລົງຊີວິດຂອງຊຸມຊົນໃນວຽກງານການປະມົງ ໂດຍສຳພາດສຸມເອົາຂໍ້ມູນຈຳນວນ 30 ຄອບຄົວຕໍ່ບ້ານ ພ້ອມທັງສຳຫຼວດຄວາມອຸດົມສົມບູນຂອງຊີວະນານາພັນແມ່ນ້ຳຂອງຕອນກາງທີ່ໄດ້ເລືອກເອົາຈຸດສຳຫຼວດ 4 ຈຸດໃນ 2 ແຂວງເປົ້າໝາຍ (ບ້ານແກ້ງສະດອກ ບ້ານບຸ້ງກວາງ ແຂວງບໍລິຄຳໄຊ ບ້ານຫີນບູນເໜືອ-ໃຕ້ ບ້ານນາເມືອງ ແຂວງຄຳມ່ວນ) ໂດຍແມ່ນທີມງານສຳຫຼວດຈາກມະຫາວິທະຍາໄລນະຄອນພະນົມ ອຸດອນທານີ ຄະນະພາກວິທະຍາສາດທຳມະຊາດປະເທດໄທ.

ສ່ວນກິດຈະກຳຕິດຕາມການຫາປາແມ່ນໃຫ້ຊາວປະມົງຂອງບ້ານເປັນຜູ້ຕິດຕາມ ບັນທຶກຂໍ້ມູນ ເຊິ່ງຄັດເລືອກເອົາ 15 ຄົນຕໍ່ບ້ານ ແລະ ກຳນົດໄລຍະຂອງການຕິດຕາມການຫາປາ ເຊິ່ງລະດູຝົນເດືອນມິຖຸນາຫາເດືອນສິງຫາ ລະດູແລ້ງແຕ່ເດືອນທັນວາຫາເດືອນກຸມພາຂອງທຸກໆປີ ພ້ອມນັ້ນໄດ້ສຳພາດຂໍ້ມູນດ້ານຊະນິດພັນປາທີ່ໃກ້ຈະສູນພັນ ເພື່ອເປັນຕົວຊີ້ວັດໃນການສ້າງວັງສະຫງວນ ເຊິ່ງຜ່ານການສຳພາດທີມງານເຫັນດີກຳນົດເອົາ 8 ຊະນິດພັນປາ ເພື່ອເປັນຕົວຊີ້ວັດ ຄື: ປາບຶກ ປາຝາໄລ (ປະເພດຫວງຫ້າມບັນຊີ I) ປາເຄິງ ປາເອີນຂາວ ປາ ນາງແດງ (ປະເພດຄຸ້ມຄອງບັນຊີ ທີ II) ປາແຂ້ຄວາຍ ປາວາໜໍ (ປະເພດທົ່ວໄປບັນຊີ III) ແລະ ໄດ້ສຳເລັດກິດຈະກຳສ້າງວັງສະຫງວນໄປແລ້ວບາງບ້ານ ຄື: ແຂວງບໍລິຄຳ ໄຊ ມີ 9 ບ້ານເປົ້າໝາຍ 8 ວັງສະຫງວນ ໄດ້ສຳເລັດການກຳນົດສະຖານທີ່ສ້າງວັງສະຫງວນ ຈັດຕັ້ງລະບຽບການຄຸ້ມຄອງ ຄັດເລືອກໜ່ວຍງານຮັບຜິດຊອບຂັ້ນບ້ານ 4 ບ້ານໃນຈຳນວນ 9 ບ້ານຢູ່ໃນ 3 ເມືອງ ສ່ວນແຂວງຄຳມ່ວນມີ 10 ບ້ານເປົ້າໝາຍ 9 ວັງສະຫງວນ ໄດ້ສຳເລັດກຳນົດສະຖານທີ່ສ້າງສະຫງວນຈັດຕັ້ງລະບຽບການຄຸ້ມຄອງຄັດເລືອກໜ່ວຍງານຮັບຜິດຊອບຂັ້ນບ້ານ 3 ບ້ານໃນຈຳນວນ 10 ບ້ານຂອງ 3 ເມືອງ.

ເຖິງຢ່າງໃດກໍ່ຕາມຜ່ານການຈັດຕັ້ງປະຕິບັດໂຄງການໄລຍະ 6 ເດືອນຜ່ານມາໄດ້ພົບຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ ເປັນຕົ້ນແມ່ນສະພາບດິນຟ້າອາກາດບໍ່ເປັນໃຈໃນລະດູທຳການຜະລິດ ຍານພາຫານະບໍ່ພຽງພໍ ແລະ ງົບປະມານເມື່ອທຽບໃສ່ຈຳນວນບ້ານເປົ້າໝາຍໃນປັດຈຸບັນ ພ້ອມນັ້ນ ພື້ນທີ່ບ້ານທີ່ເລືອກບໍ່ເໝາະສົມໃນການສ້າງເຂດສະຫງວນປາ ແລະ ສັດນ້ຳອື່ນໆ ໂດຍສະເພາະບໍ່ມີວັງນ້ຳເລິກ ເປັນດອນຊາຍ ແລະ ເປັນບ້ານທີ່ມີວັງສະຫງວນແລ້ວເຮັດໃຫ້ມີການປ່ຽນແປງບ້ານເປົ້າໝາຍ ໂດຍການເປັນເອກະພາບ ການຕົກລົງເຫັນດີປ່ຽນຈາກອົງການຈັດຕັ້ງທຸກຂັ້ນພື້ນຖານຂອງບ້ານ ແລະ ອົງການທີ່ກ່ຽວຂ້ອງ ຫ້ອງການກະສິກຳເມືອງ ຂະແໜງການລ້ຽງສັດ-ການປະມົງ ແລະ ພະແນກ ເຫັນພ້ອມໃນການປ່ຽນບ້ານທີ່ເໝາະສົມແທນ ເຊິ່ງແຂວງບໍລິຄຳໄຊ ບ້ານປາກຊັນ ປ່ຽນແທນບ້ານນ້ຳຫຽບ ບ້ານຊອດ ປ່ຽນແທນບ້ານປາກກະດິງເໜືອ ແລະ ບ້ານທ່າກະຖິ່ນ ປ່ຽນແທນບ້ານປາກກະດິງໃຕ້ ແຂວງຄຳມ່ວນ ບ້ານຫ້ວຍລີ້ ປ່ຽນແທນບ້ານມ່ວງສຸມ ບ້ານຈອມແຈ້ງ ປ່ຽນແທນບ້ານປາກເປັ່ງ ແລະ ບານຫີນລາດ ປ່ຽນແທນບ້ານແມ້ງ.

ສຳລັບທິດທາງໃນ 6 ເດືອນຕໍ່ໜ້າ ໂຄງການຈະສືບຕໍ່ສຳຫຼວດຕິດຕາມການຫາປາຂອງຊາວປະມົງ ກຳນົດສະຖານທີ່ສ້າງວັງສະຫງວນ ຮ່າງລະບຽບຄັດເລືອກຄະນະກຳມະການ ຈັດຕັ້ງໜ່ວຍງານຮັບຜິດຊອບ ທົບທວນ-ຜ່ານກົດລະບຽບຂັ້ນບ້ານ ກຸ່ມ ແລະ ເມືອງ ເພື່ອຮອງຮັບເອົາກົດລະບຽບຂອງບ້ານເປົ້າໝາຍ ຄື: ແຂວງບໍລິຄຳໄຊ ມີ ບ້ານທ່າໂພນສັນ ທ່າພະບາດ ຜາໂປ່ງ ກ້ວຍອຸດົມ ແລະ ບ້ານປາກຊັນ ແຂວງຄຳມ່ວນ ມີ ບ້ານດອນຂຽວ ໃຕ້ ບຶ່ງສານທ່າ ກຸດຈັບ ຫ້ວຍນາງລີ້ ປຸ່ງເໜືອ ແລະ ບ້ານຫີນລາດ ຄັດເລືອກ ຈັດຕັ້ງ-ສ້າງລະບຽບໃຫ້ໜ່ວຍງານກວດກາລາດຕະເວນຂອງຊາວປະມົງຂັ້ນບ້ານ ພ້ອມທັງເຝິກອົບຮົມທີມງານລາດຕະເວນຂັ້ນບ້ານ ເປັນຕົ້ນ ວິທີການລາດຕະເວນ ບັນທຶກແບບຟອມການນຳໃຊ້ອຸປະກອນຕ່າງໆ ແລະ ປະຖົມພະຍາບານຂັ້ນຕົ້ນ ເພື່ອໃຫ້ມີຄວາມປອດໄພ ແລະ ອື່ນໆ.



---

# AirAsia ໄດ້ຮັບລາງວັນອຸດສາຫະກຳການບິນເປັນປີທີ ໙



✣ ວັນທີ 21 ມິຖຸນາ 2017 ຜ່ານມາ ທີ່ ນະຄອນຫຼວງປາຣີ ປະເທດຝຣັ່ງ AirAsia ໄດ້ຮັບລາງວັນອຸດສາຫະກຳການບິນ ເປັນສາຍການບິນລາຄາຖືກດີທີ່ສຸດຂອງໂລກເປັນປີທີເກົ້າ.

ບໍລິສັດຂົນສົ່ງລາຄາຖືກລາຍໃຫຍ່ທີ່ສຸດຂອງອາຊີໄດ້ຮັບຄຳຊົມເຊີຍ ແລະ ຊະນະລາງວັນສາຍການບິນຂອງໂລກ Skytrax ປະຈຳປີ 2017 ທ່ານ ຊູໄຮຣາ ຮາດຊານ (Suhaila Hassan) ຫົວໜ້າພະນັກງານປະຈຳເຮືອບິນກຸ່ມບໍລິສັດ AirAsia ຜູ້ທີ່ໄດ້ເຮັດວຽກກັບບໍລິສັດມາເປັນເວລາ 20 ປີ ຂຶ້ນຮັບລາງວັນ ໂດຍມີຕົວແທນຂອງ AirAsia ທ່ານ ດາວິດ ຟອສເຕີ (David Foster) ແລະ ນັກເຕະບານທີມຊາດເບຣຊິນ ທ່ານ ໂຣເບີໂຕ ຄາລອສ (Roberto Carlos).

ທ່ານ ຟອສເຕີ (Foster) ແມ່ນຜູ້ຜະລິດນັກດົນຕີ ແລະ ນັກປະພັນຊາວການາດາທີ່ມີຊື່ສຽງລະດັບໂລກ ຜູ້ທີ່ໄດ້ຮັບລາງວັນແກຣມມີອາວອດ (Grammy Awards) 16 ລາງວັນ ຈາກການສະເໜີຊື່ເຂົ້າຊິງລາງວັນ 47 ລາຍການ ຕະຫຼອດໄລຍະເກືອບ 4 ທົດສະວັດ ໃນຂະນະທີ່ທ່ານ ຄາລອສ (Carlos) ແມ່ນກອງຫຼັງທີ່ມີຊື່ສຽງ ຊ່ວຍໃຫ້ທີມຣີນມາຣິດ (Real Madrid) ຊະນະລາງວັນ ລາລີກາ ສະເປນ (Spanish La Liga) 4 ຄັ້ງ ແລະ ມີສ່ວນ ຊ່ວຍໃຫ້ທີມຊາດເບຣຊິນໄດ້ຄອງແຊ້ມໂລກ ໃນປີ 2002.

“ລາງວັນອອດສະກາອຸດສາຫະກຳການບິນ (Oscars of the Aviation Industry)” ລາງວັນ Skytrax ແມ່ນຂີດໝາຍອັນເປັນເລີດຂອງສາຍການບິນໃນທົ່ວໂລກ ເຊິ່ງມີລູກຄ້າຫຼາຍກວ່າ 19,9 ລ້ານຄົນເຂົ້າຮ່ວມຕອບແບບສອບຖາມການສຳຫຼວດໃນທົ່ວໂລກ ເຊິ່ງມາຈາກຫຼາຍກວ່າ 105 ສັນຊາດທົ່ວໂລກ ມີມາດຕະຖານການວັດແທກຜະລິດຕະພັນ ແລະ ການບໍລິການໃນແຖວໜ້າຂອງສາຍການບິນຈຳນວນ 49 ຕົວວັດແທກຜົນງານທີ່ສຳຄັນ.

ຫົວໜ້າບໍລິຫານກຸ່ມ AirAsia ທ່ານ ໂທນີ ເຟີນານເດັສ (Tony Fernandes) ກ່າວວ່າ: “ອາຊຽນໄດ້ສ້າງສະຖິຕິໃໝ່ພວກເຮົາເປັນແຊ້ມໂລກເກົ້າສະໄໝຢູ່ໃນເວລານີ້ ເພື່ອເປັນການນຳມາປຽບທຽບໃຫ້ເຫັນນັ້ນເບຣຊິນເປັນແຊ້ມໂລກກິລາບານເຕະ FIFA World Cup 5 ສະໄໝ ໄມເຄີລ ຈໍແດນ (Michael Jordan) ເປັນແຊ້ມບານບ້ວງ NBA 6 ສະໄໝ ແລະ ໄມເຄີລ ເຟລສ໌ (Michael Phelps) ເປັນເຈົ້າຂອງສະຖິຕິອັນດັບໜຶ່ງຄອງຫຼຽນຄຳໂອລິມປິກ (Olympics) 8 ຫຼຽນໃນຄັ້ງດຽວ.

“ພວກເຮົາຖືສຳຄັນຕໍ່ຕຳແໜ່ງແຊ້ມໂລກ ແລະ ຈະປັບປຸງທັງແຂກ ແລະ ຫຸ້ນສ່ວນຂອງພວກເຮົາໃຫ້ດີຂຶ້ນເລື້ອຍໆ ຕະຫຼອດໄລຍະ 15 ປີຜ່ານມາ ພວກເຮົາໄດ້ສ້າງຍີ່ຫໍ້ອັນຍິ່ງໃຫຍ່ ແລະ ຕະຫຼອດ 15 ປີຕໍ່ໜ້າ ພວກເຮົາຈະກ້າວໄປສູ່ One AirAsia ເຊິ່ງຈະເປັນສາຍການບິນຂອງປະຊາຄົມອາຊຽນຢ່າງແທ້ຈິງ ພວກເຮົາຍັງຢາກຈະສ້າງພວກເຮົາຄືນໃໝ່ໃຫ້ເປັນສາຍການບິນດິຈິຕອລ ແລະ ນຳໃຊ້ເຕັກໂນໂລຊີ ເພື່ອຂັບເຄື່ອນໃຫ້ເກີດຄ່ານິຍົມເພີ່ມຂຶ້ນອີກ.

---




## ກະດານ

ຄຳນາມ ຄຳລາວເດີມ ແປວ່າ ໄມ້ທີ່ຖາກຫຼືເລື່ອຍເປັນແຜ່ນໃຫຍ່ (ວັດຈະນານຸກົມ ທອງຄຳ ອ່ອນມະນີສອນ, 2008:11) ຈຶ່ງພົບເຫັນໃຊ້ໃນຊີວິດປະຈຳວັນ ເພາະເປັນອຸປະກອນໃຊ້ສຳລັບການສຶກສາຮ່ຳຮຽນໃນໂຮງຮຽນ ຫຼືໃຊ້ໃນຫ້ອງການ... ເອີ້ນກະດານດຳ, ກະດານຂາວ... ແຕ່ກໍເຫັນໃຊ້ກັບສິ່ງທີ່ເປັນຫີນກໍມີ ເອີ້ນກະດານຫີນ ໝາຍເຖິງແຜ່ນຫີນ, ພະລານຫີນຕາມທຳມະຊາດ, ໃຊ້ກັບກະດູກຫົວ ເອີ້ນກະດານຫົວ. ໃນສະໄໝກ່ອນ ເວລາຕີເສິກກັນ ກອງທະຫານມັກຢືນລຽນເປັນແຖວຍາວເຊິ່ງໜ້າກັບສັດຕູແລ້ວກໍແລ່ນເຂົ້າລົບຟັນກັນເອີ້ນວ່າຢືນເປັນໜ້າກະດານ, ແລ່ນເປັນໜ້າກະດານເຂົ້າໃສ່ກັນ. ທີ່ພົບເຫັນໃຊ້ໃນທາງວັນນະຄະດີເກົ່າຫຼາຍ

ຕົວຢ່າງ: ໃນປັດຈຸບັນເຫັນໃຊ້:

- ຫ້ອງຮຽນມີກະດານໄມ້ທາສີດຳຂຽນດ້ວຍສໍຂາວ
- ຫ້ອງການໃຊ້ກະດານຂາວຂຽນດ້ວຍບິກເຝີດ
- ນ້ຳຕົກຕາດມີກະດານຫີນເປັນລັ່ນໆກວ້າງງາມຕາ

ໃນວັນນະຄະດີເກົ່າມີ:

...ປືນຜະຫຼຽງມ້າງ ກະດານຫົວເຕັ້ນໄຕ່ ຊວງຟ່າງຮ້ອຍໄກວກ້າວ ແກວ່ງຫລີ... (ສັງສິນໄຊ)

...ໝໍກໍບາຍສໍຕ່ອງ ຂຽນຂີດກະດານຫີນ...

ຕັ້ງເລກລົງລຽນແຖວ ໃສ່ກະດານເຕັມແປ້ນ... (ນິທານຊຽງໝ້ຽງ)

**ໂດຍ: ແສງຈັນ ສຸຂະເສມ**

---

# ຈາກຮ້ານຂາຍເຄື່ອງຫຼິ້ນ ກາຍເປັນໂຮງຮຽນລ້ຽງເດັກ ໂຢໂຢ




✣ ໂຮງຮຽນລ້ຽງເດັກ ໂຢໂຢ ເປັນອີກໜຶ່ງສະຖາບັນການສຶກສາພາກເອກະຊົນ ທີ່ເປີດຫຼັກສູດການຮຽນ-ການສອນຕາມ 5 ຫຼັກມູນຂອງການສຶກສາ ທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ ດ້ວຍການສ້າງເດັກນ້ອຍໄປຄຽງຄູ່ກັບການສຳຜັດກິດຈະກຳຕົວຈິງທັງໃນ ແລະ ນອກຫຼັກສູດ ເພື່ອໃຫ້ເດັກນ້ອຍໄດ້ມີຄວາມເບີກບານມ່ວນຊື່ນ ມີການພັດທະນາທາງດ້ານຮ່າງກາຍ ຈິດໃຈ ແລະ ມັນສະໝອງ ເມື່ອເຕີບໃຫຍ່ຂຶ້ນມາຈະໄດ້ກາຍເປັນຄົນດີຂອງພໍ່ແມ່ ແລະ ປະເທດຊາດໃນອະນາຄົດ.

**ທ່ານ ສີບຸນຍໍ ແສງອາລຸນ** ຜູ້ອຳນວຍການໂຮງຮຽນລ້ຽງເດັກ ໂຢໂຢ ລາຍງານໃຫ້ຮູ້ເມື່ອບໍ່ດົນຜ່ານມາວ່າ: ໂຮງຮຽນຂອງພວກເຮົາແມ່ນເລີ່ມຕົ້ນຈາກຮ້ານຂາຍເຄື່ອງຫຼິ້ນເດັກນ້ອຍປະເພດຝຶກທັກສະ ແລະ ມັນສະໝອງ ເຊິ່ງເປີດມາໄດ້ປະມານ 2 ປີແລ້ວ ແລະ ສະໜອງເຄື່ອງຫຼິ້ນໃຫ້ກັບຫຼາຍໆໂຮງຮຽນ ພາຍໃນນະຄອນຫຼວງວຽງຈັນ ບໍ່ວ່າຈະເປັນໂຮງຮຽນນ້ອຍ ໃຫຍ່ ແລະ ໂຮງຮຽນນາໆຊາດ ຜ່ານການດຳເນີນການດັ່ງກ່າວເຫັນວ່າໄດ້ຮັບສຽງຕອບຮັບເປັນຢ່າງດີຈາກລູກຄ້າ ກໍ່ຄື ໂຮງຮຽນຕ່າງໆ ຈຶ່ງເກີດມີແນວຄິດຢາກເປີດໂຮງຮຽນເປັນຂອງຕົນເອງ ແລະ ໃນທີ່ສຸດກໍ່ຕັດສິນໃຈດ້ວຍການນຳໃຊ້ອຸປະກອນ ຫຼື ເຄື່ອງຫຼິ້ນທີ່ມີມານຳໃຊ້ເຂົ້າໃນການຮຽນ-ການສອນ ແລະ ເຝິກທັກສະໃຫ້ແກ່ເດັກ.

ພາຍຫຼັງສ້າງຕັ້ງໂຮງຮຽນເປັນທີ່ຮຽບຮ້ອຍແລ້ວນັ້ນ ພາຍໃຕ້ຊື່ “ໂຮງຮຽນລ້ຽງເດັກ ໂຢໂຢ” ພວກເຮົາກໍ່ໄດ້ວາງວິໄສທັດໄວ້ໂດຍໃຫ້ເດັກນ້ອຍໄດ້ສຳຜັດກັບຕົວຈິງ ບໍ່ວ່າຈະເປັນອຸປະກອນ ເຄື່ອງຫຼິ້ນ ສະພາບແວດລ້ອມ ແລະ ມີຄຳຂວັນທີ່ວ່າ: “ໂຮງຮຽນລ້ຽງເດັກ ໂຢໂຢ ເພາະການຫຼິ້ນຄືການຮຽນຮູ້” ດັ່ງນັ້ນ ເພື່ອສ້າງເດັກນ້ອຍໃຫ້ມີຄຸນະພາບທັງດ້ານຄວາມຮູ້ ຄວາມສາມາດ ແລະ ມັນສະໝອງ ກາຍເປັນດີຂອງພໍ່ແມ່ ແລະ ປະເທດຊາດ ເມື່ອເຕີບໃຫຍ່ຂຶ້ນມາຈຶ່ງໄດ້ຖືເອົາເດັກນ້ອຍເປັນໃຈກາງໃນການສິດສອນ ແລະ ໃຫ້ເດັກນ້ອຍໄດ້ສຳຜັດກັບສະພາບຕົວຈິງ ໂດຍຜ່ານກິດຈະກຳຕ່າງໆ ທັງໃນຫ້ອງ ແລະ ນອກຫ້ອງຮຽນ ໄປຄຽງຄູ່ກັບຫຼັກສູດການຮຽນ-ການສອນທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ ນອກຈາກນີ້ທາງໂຮງຮຽນຂອງພວກເຮົາຍັງມີເຄື່ອງຫຼິ້ນທັກສະຫຼາຍຢ່າງ ເພື່ອໃຫ້ເດັກນ້ອຍໄດ້ມີຄວາມເບີກບານມ່ວນຊື່ນ ມີການພັດທະນາທາງດ້ານຮ່າງກາຍ ແລະ ຈິດໃຈ ສ່ວນການຈັດກິດຈະກຳໄດ້ແບ່ງອອກເປັນ 6 ກິດຈະກຳຕໍ່ມື້ ຄື: ການອະນາໄມເດັກນ້ອຍ ການເຮັດກິດຈະກຳຕ່າງໆ ການນຳໃຊ້ພາສາລາວ ເປັນຕົ້ນແມ່ນ ການເລົ່າເລື່ອງ ແລະ ຮ້ອງເພງ ກິດຈະກຳກາງແຈ້ງ ກິດຈະກຳເສີມຫຼັກສູດ ແລະ ກິດຈະກຳເສີມທັກສະອື່ນໆ.

ຂະນະດຽວກັນ **ທ່ານນາງ ບົວໄຂ ທອງສີ** ຮອງອຳນວຍການ ໂຮງຮຽນລ້ຽງເດັກ ໂຢໂຢ ກ່າວວ່າ: ສຳລັບໂຮງຮຽນລ້ຽງເດັກ ໂຢໂຢ ແມ່ນໄດ້ເປີດການຮຽນ-ການສອນ ໃຫ້ໄປຕາມ 5 ຫຼັກມູນຂອງການສຶກສາ ຄື: ຄຸນສົມບັດສຶກສາ ປັນຍາສຶກສາ ພະລະສຶກສາ ສິລະປະສຶກສາ ແລະ ແຮງງານສຶກສາ ເພື່ອໃຫ້ໄດ້ມາດຕະຖານຄຸນະພາບການສຶກສາທີ່ດີ ທັງສອດຄ່ອງກັບແຜນພັດທະການທີ່ກະຊວງສຶກສາທິການ ແລະ ກິລາ ວາງອອກ.

ໂຮງຮຽນລ້ຽງເດັກ ໂຢໂຢ ຕັ້ງຢູ່ບ້ານບຶງຂະຫຍອງ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ເຊິ່ງໄດ້ເປີດການຮຽນ-ການສອນມາໄດ້ປະມານ 2 ປີ ກໍ່ເຫັນວ່າໄດ້ຮັບຄວາມໄວ້ວາງໃຈຈາກຜູ້ປົກຄອງ ທີ່ເອົາລູກຫຼານໄປຝາກນັບແຕ່ລ້ຽງເດັກ 1 ຫາອະນຸບານ 1 ປັດຈຸບັນມີນັກຮຽນທັງໝົດ 60 ຄົນ ຍິງ 32 ຄົນ ແລະ ມີຄູສອນ 18 ຄົນ.

**ນຳສະເໜີໂດຍ: ຄົນເມືອງໃຕ້**